ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

****** **** ******

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 28 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 8 ກໍລະກົດ 2016

ສຳນັກງານ ຄຄຊ
ເລກທີ 0659
ວັນທີ 11 JUL 2016
ໂທລະສັບ 021 217770

# ລາຍງານການເຄື່ອນໄຫວປະຈຳອາທິດ
# ທີ 27/06/2016 ຫາ 01/07/2016 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ
# ຂອງທະນາຄານແຫ່ງ ສປປ ລາວ

## I. ວຽກງານການເມືອງແນວຄິດ

ພະນັກງານທຸກຄົນມີຄວາມອຸ່ນອ່ຽນທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ ມີສະຕິຕໍ່ການຈັດຕັ້ງ ແລະ ລະບຽບກົດໝາຍຢ່າງເຄັ່ງຄັດ; ຕັ້ງໜ້າປະຕິບັດວຽກງານຕາມພາລະບົດບາດ, ຕາມການຈັດຕັ້ງມອບໝາຍ, ປະຕິບັດວຽກງານຕາມລະບອບລວມສູນປະຊາທິປະໄຕ ໂດຍບຸກຄົນຮັບຜິດຊອບ ແລະ ປະຕິບັດລະບຽບລັດຖະກອນຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

## II. ວຽກງານວິຊາສະເພາະ

### 1. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 890 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 13,23% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 397,51 ຕື້ກີບ ຫຼຸດລົງ 36,13% ເມື່ອທຽບໃສ່ອາທິດຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (24-30/06/2016) ມີຈຳນວນ 2.331 ຄັ້ງ ໂດຍມີມູນຄ່າ 526,83 ຕື້ກີບ ເພີ່ມຂຶ້ນ 44,60% ຊຶ່ງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກຳຫຼາຍກວ່າໝູ່ ຈຳນວນ 660 ຄັ້ງ.

### 2. ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.117,40 ຈຸດ ເພີ່ມຂຶ້ນ 0,51% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດ ມີປະລິມານຊື້-ຂາຍຮຸ້ນທັງໝົດ 95.100 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 513,91 ລ້ານກີບ ເພີ່ມຂຶ້ນ 15,07% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 47,69% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 4.802 ກີບ/ຮຸ້ນ ເພີ່ມຂຶ້ນ 76 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 19.300 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 92,67 ລ້ານກີບ ຫຼຸດລົງ 38,14% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 47,08% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,32%[1].

ຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 5.561 ກີບ/ຮຸ້ນ ຫຼຸດລົງ 49 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 75.700 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 420,96 ລ້ານ

---

ລາຄາສະເລ່ຍ ແມ່ນລາຄາທີ່ສະເລ່ຍຊື້-ຂາຍຂອງຮຸ້ນພາຍໃນອາທິດນັ້ນ;

[1]ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດ ສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%, 1% ສຳລັບຜູ້ລົງທຶນປະເພດບຸກຄົນ ແລະ 1% ສຳລັບຜູ້ລົງທຶນປະເພດສະຖາບັນ;

ກີບ ເພີ່ມຂຶ້ນ 41,84% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 48,56% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 13,83%[2].

ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາປິດ 6.500 ກີບ/ຮຸ້ນ ຫຼຸດລົງ 300 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ໃນອາທິດນີ້ບໍ່ມີການຈັບຄູ່ຊື້-ຂາຍ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,77%[3].

ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາປິດ 2.800 ກີບ/ຮຸ້ນ ບໍ່ປ່ຽນແປງ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 100 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 0,28 ລ້ານກີບ PTL. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 50% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,66%[4].

ຮຸ້ນຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (SVN) ມີລາຄາຊື້-ຂາຍສະເລ່ຍ 3.000 ກີບ/ຮຸ້ນ ບໍ່ປ່ຽນແປງ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ໃນອາທິດນີ້ບໍ່ມີການຈັບຄູ່ຊື້-ຂາຍ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 4,20%[5].

3. <u>ວຽກງານອື່ນໆ ທີ່ພົ້ນເດັ່ນ.</u>

- ສໍາເລັດການພົບປະລະຫວ່າງ ທະນາຄານແຫ່ງ ສປປ ລາວ ແລະ ຄະນະກໍາມະທິການແຜນການ , ການເງິນ ແລະ ການລົງທຶນ ສະພາແຫ່ງຊາດ ເພື່ອປຶກສາຫາລືກັນໃນຂົງເຂດຄວາມຮັບຜິດຊອບຂອງບາງວຽກງານ ທີ່ທະນາຄານແຫ່ງ ສປປ ລາວ;
- ທ່ານ ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ ໄດ້ສໍາເລັດການເຂົ້າຮ່ວມກອງປະຊຸມຄະນະຊີ້ນໍາລະດັບຊາດ ເພື່ອຂະບວນການໂຕະມົນ ທີ່ກະຊວງແຜນການ ແລະ ການລົງທຶນ;
- ສໍາເລັດການຈັດກອງປະຊຸມ: ❶ຝຶກອົບຮົມວຽກງານກວດກາພັກ-ລັດ ໃຫ້ພະນັກງານທີ່ເຮັດວຽກງານກວດກາໃນຂະແໜງການທະນາຄານ ຊຸດທີ VIII ປະຈໍາປີ 2016 ຢູ່ສະຫວັນນະເຂດ, ❷ຄົ້ນຄວ້າ-ປຶກສາຫາລື ກ່ຽວກັບການຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍຄໍາແນະນໍາວ່າດ້ວຍ ການນໍາໃຊ້ມາດຕະການຊົ່ວຄາວຕໍ່ຊັບສິນທີ່ພົວພັນກັບການຟອກເງິນ ຫຼື ສະໜອງທຶນແກ່ການກໍ່ການຮ້າຍ ສະບັບເລກທີ 08/ຄຕຟງ, ລົງວັນທີ 30 ມີນາ 2016 ເພື່ອກໍານົດບັນຊີຊັບສິນທີ່ພົວພັນກັບການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຮ່ວມກັບບັນດາອົງການສືບສວນ-ສອບສວນ; ❸ພົບປະ 2 ຝ່າຍລະຫວ່າງຄະນະຮັບຜິດຊອບ ທຫລ ກັບ ຄະນະກວດສອບແຫ່ງລັດ ແລະ ຄະນະກວດສອບແຫ່ງລັດທີ່ທະນາຄານແຫ່ງ ສປປ ລາວ;
- ສໍາເລັດການເຂົ້າຮ່ວມ: ❶ກອງປະຊຸມເຈົ້າໜ້າທີ່ອາວຸໂສດ້ານເສດຖະກິດອາຊຽນ (SEOM) ຄັ້ງທີ 3/47 ທີ່ໂຮງແຮມລາວພຣາຊາ, ❷ ກອງປະຊຸມສໍາມະນາ ໃນຫົວຂໍ້: “The National Workshop for Investments, Services and Trade (AISSIST)” ທີ່ ໂຮງແຮມເມີກຽວນະຄອນຫຼວງວຽງຈັນ, ❸ກອງປະຊຸມພັດທະນາລະບຽບຫຼັກການວ່າດ້ວຍການປະກັນຄຸນນະພາບພາຍໃນສະຖານສຶກສາ ຢູ່ແຂວງວຽງຈັນ, ❹ສໍາມະນາ ແລະ ຝຶກອົບຮົມດ້ານວິຊາການ ໃນຫົວຂໍ້: “ການພັດທະນາລະບົບການແກ້ໄຂບັນຫາສະຖາບັນການເງິນ ແລະ ຂັ້ນຕອນການຈ່າຍຄືນເງິນຝາກ” ທີ່ໂຮງແຮມລາວພລາຊາ, ❺ກອງປະຊຸມຜ່ານດໍາລັດວ່າດ້ວຍການເຊົ່າສິນເຊື່ອ (ສະບັບປັບປຸງ) ແລະ ຂໍ້ຕົກລົງວ່າດ້ວຍການບໍລິການການເງິນຜ່ານທາງໂທລະສັບມືຖື ທີ່ ທຫລ;
- ສໍາເລັດການຮ່ວມຕ້ອນຮັບຄະນະຊ່ຽວຊານຈາກ WB ທີ່ໄດ້ພົບປະ ແລະ ປຶກສາຫາລືກັບກົມກ່ຽວຂ້ອງຂອງ ທຫລ ໃນວຽກງານການຈັດຕັ້ງປະຕິບັດໂຄງການ PRSO (8,9,10,11) ໃນການເກັບກໍາຂໍ້ມູນ ເພື່ອກະກຽມລາຍງານການຈັດຕັ້ງປະຕິບັດ ແຜນການສະໜັບສະໜູນການຫຼຸດຜ່ອນຄວາມທຸກຍາກຊຸດທີ 3 (ໄລຍະທີ 3);

---

[2] ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດ ສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 25%, 1% ສໍາລັບຜູ້ລົງທຶນປະເພດບຸກຄົນ ແລະ 5% ສໍາລັບຜູ້ລົງທຶນປະເພດສະຖາບັນ;

[3] ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ;

[4] ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ;

[5] ສັດສ່ວນຖືຄອງຮຸ້ນ SVN ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ.

- ສໍາເລັດການຄົ້ນຄວ້າ ແລະ ນໍາສະເໜີຂັ້ນເທິງກ່ຽວກັບການສະເໜີຂໍສ້າງຕັ້ງໜ່ວຍບໍລິການຂອງທະນາຄານ ນະໂຍບາຍ ຈໍານວນ 4 ແຫ່ງ;
- ສໍາເລັດການປັບປຸງຄືນແຜນງົບປະມານລາຍຮັບ-ລາຍຈ່າຍ ແລະ ແຜນກໍ່ສ້າງພື້ນຖານປະກອບວັດຖຸເຕັກນິກປີ 2016 ເພື່ອກະກຽມລາຍງານຕໍ່ກອງປະຊຸມສະພາບໍລິຫານຂອງ ທຫລ.

III. ແຜນວຽກຈຸດສຸມອາທິດຕໍ່ໄປ:

- ສືບຕໍ່ດໍາເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ດັ່ງທີ່ໄດ້ກໍານົດໄວ້ໃນແຜນວຽກງານປະຈໍາປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ;
- ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາແລກປ່ຽນລະຫວ່າງທະນາຄານ;
- ສືບຕໍ່ຄົ້ນຄວ້າ: ❶ ສຶກສາຄົ້ນຄວ້າເນື້ອໃນຂອງຫຼັກການ ບາເຊວ 2, ວິທີປະຕິບັດ ແລະ ບົດຮຽນຂອງສາກົນ ເພື່ອເປັນແນວທາງໃນການຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດ, ❷ຄົ້ນຄວ້າກ່ຽວກັບການກໍານົດຮູບແບບ ແລະ ທ່າອ່ຽງຂອງການຟອກເງິນ (Typology) ຂອງ ສປປ ລາວ, ❸ຄົ້ນຄວ້າບົດແນະນໍາມາດຕະຖານສາກົນດ້ານການບັນຊີ IAS18 ແລະ ລາຍຮັບ IAS36 ການເສື່ອມມູນຄ່າຂອງຊັບສິນ ແລະ IFRS10 ເອກະສານລາຍງານທາງການເງິນແບບລວມກິດຈະການ, ❹ສ້າງລະບຽບວ່າດ້ວຍສູນຊໍາລະສະສາງ, ❺ຄົ້ນຄວ້າແບບໂລໂກ້ຂອງ ສຕຟງ ຕາມຄໍາຄິດເຫັນຂອງກອງປະຊຸມ NCC ຄັ້ງທີ II/2016;
- ສືບຕໍ່ສ້າງ ແລະ ປັບປຸງຮ່າງລະບຽບວ່າດ້ວຍລາຍການທີ່ກ່ຽວພັນຂອງບໍລິສັດຈົດທະບຽນ, ສະພາບໍລິຫານຂອງບໍລິສັດອອກຈໍາໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ, ການອອກຈໍາໜ່າຍຮຸ້ນກູ້ຢູ່ຕ່າງປະເທດຂອງບໍລິສັດພາຍໃນ ສປປ ລາວ, ການບັນຊີ ແລະ ການກວດສອບໃນວຽກງານຫຼັກຊັບ, ສິດ ແລະ ໜ້າທີ່ຂອງຜູ້ກໍານົດລະຫັດຫຼັກຊັບແຫ່ງຊາດ ແລະ ການຊື້-ຂາຍຫຼັກຊັບ ທີ່ບໍ່ວາງເງິນມັດຈໍາລວງໜ້າ (Non Pre-Funded);
- ສືບຕໍ່ສ້າງປຶ້ມຄູ່ມືຖອດຖອນບົດຮຽນການເປັນປະທານ ແລະ ເຈົ້າພາບກອງປະຊຸມຂັ້ນສູງວຽກງານອາຊຽນ ແລະ ອາຊຽນ+3 ຂອງຂະແໜງການທະນາຄານ ທີ່ນະຄອນຫຼວງວຽງຈັນ;
- ສືບຕໍ່ປະຕິບັດເງື່ອນໄຂ PRSO 8-11 ຕາມແຜນການ;
- ສືບຕໍ່ກະກຽມເປີດກອງປະຊຸມສະພາບໍລິຫານທະນາຄານແຫ່ງ ສປປ ລາວ ຄັ້ງທີ I ປະຈໍາປີ 2016;
- ສືບຕໍ່ກະກຽມເປີດກອງປະຊຸມສະພາບໍລິຫານ ສະຖາບັນການທະນາຄານ ສະໄໝສາມັນ ຄັ້ງທີ II ປະຈໍາປີ 2016.

➢ ໝາຍເຫດ: ສະພາບອັດຕາແລກປ່ຽນພາຍໃນ ແລະ ສາກົນບໍ່ສາມາດລາຍງານໄດ້ ເນື່ອງຈາກຄັດຂ້ອງທາງເຕັກນິກ ຈຶ່ງບໍ່ສາມາດເກັບກໍາຂໍ້ມູນໄດ້.

**ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ.**

ເພັດສະຖາພອນ ແກ້ວວົງວິຈິດ